ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ເລກທີ 04 /ປກສ
ນະຄອນຫຼວງວຽງຈັນ, ວັນທີ 16 ກຸມພາ 2022

# ຄຳແນະນຳ
# ກ່ຽວກັບການຈັດຕັ້ງຜັນຂະຫຍາຍບາງມາດຕາ
# ຂອງກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 036/ນຍ, ລົງວັນທີ 19 ກັນຍາ 2018;
- ອີງຕາມ ໜັງສືສະເໜີ ຂອງກົມໃຫຍ່ສັນຕິບານ ແລະ ການເຫັນດີ ເປັນເອກະພາບ ຂອງຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 0115 ລົງວັນທີ 15 ກຸມພາ 2022.

## ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ອອກຄຳແນະນຳ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດເນື້ອໃນ ການຜັນຂະຫຍາຍບາງມາດຕາ ຂອງກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ມີຄວາມກະຈ່າງແຈ້ງ, ຊັດເຈນ, ຮັດກຸມ, ຄົບຖ້ວນ ແລະ ເຂົ້າໃຈງ່າຍ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານການເຂົ້າ-ອອກ ຢູ່ ສປປ ລາວ. ເພື່ອແນໃສ່ເຮັດໃຫ້ ຄະນະພັກ-ຄະນະບັນຊາ ໃນແຕ່ລະຂັ້ນ ນຳພາ, ຊີ້ນຳ ນາຍ ແລະ ພົນຕຳຫຼວດ ຈັດຕັ້ງປະຕິບັດ ວຽກງານກວດຄົນເຂົ້າ-ອອກ ສປປ ລາວ ມີຄວາມເປັນເອກະພາບ ໃນທົ່ວກຳລັງປ້ອງກັນຄວາມສະຫງົບ ແລະ ເຮັດໃຫ້ການເຂົ້າ-ອອກ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ປະຕິບັດ ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ-ລະບຽບການ ກໍ່ຄືຄຳແນະນຳສະບັບນີ້.

### ມາດຕາ 2 ການຜັນຂະຫຍາຍບາງມາດຕາ

ຄຳແນະນຳ ສະບັບນີ້ ມີການຜັນຂະຫຍາຍ ມາດຕາ 9 ເງື່ອນໄຂລວມໃນການເຂົ້າ-ອອກ ສປປ ລາວ, ມາດຕາ 14 ພາຫະນະທີ່ນຳເອົາຜູ້ໂດຍສານເຂົ້າ-ອອກ ສປປ ລາວ ແລະ ມາດຕາ 27 ການຕໍ່ເວລາພັກເຊົາ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ເພື່ອເຮັດໃຫ້ເນື້ອໃນຂອງມາດຕາ

ດັ່ງກ່າວ ຈະແຈ້ງ, ຮັດກຸມ, ຄົບຖ້ວນ ແລະ ເຂົ້າໃຈງ່າຍ, ສາມາດຈັດຕັ້ງປະຕິບັດ ຢ່າງມີຄວາມເປັນເອກະພາບ ໃນທົ່ວກໍາລັງປ້ອງກັນຄວາມສະຫງົບ.

## ໝວດທີ 2
## ເງື່ອນໄຂການເຂົ້າ-ອອກ ສປປ ລາວ ແລະ ພາຫະນະ ທີ່ນໍາເອົາຜູ້ໂດຍສານເຂົ້າ-ອອກ ສປປ ລາວ

### ມາດຕາ 3 ການເຂົ້າ-ອອກ ສປປ ລາວ ຂອງຜູ້ໂດຍສານ

ຄົນລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເດີນທາງເຂົ້າ-ອອກ ສປປ ລາວ ຕ້ອງນໍາໃຊ້ເອກະສານເດີນທາງ ທີ່ຖືກຕ້ອງ, ຄົບຖ້ວນ ແລະ ສົມບູນ ແຈ້ງຕໍ່ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານຊາຍແດນ ແລະ ສະໜາມບິນສາກົນ ດ້ວຍຕົນເອງ.

ປະຕິບັດຕາມມາດຕາ 9, 10, 11, 12 ແລະ 13 ຂອງກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ.

### ມາດຕາ 4 ການນໍາໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ຂອງພົນລະເມືອງລາວ ແລະ ພົນລະເມືອງ ຂອງປະເທດໃກ້ຄຽງ ທີ່ມີຊາຍແດນຕິດຈອດກັບ ສປປ ລາວ

ພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດໃກ້ຄຽງ ທີ່ມີຊາຍແດນຕິດຈອດ ທີ່ນໍາໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ເດີນທາງເຂົ້າ-ອອກ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງນໍາໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ທີ່ຖືກຕ້ອງ, ຄົບຖ້ວນ ແລະ ສົມບູນ, ແຈ້ງເຂົ້າ-ອອກ ຕໍ່ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານຊາຍແດນ ດ້ວຍຕົນເອງ;
2. ປະຕິບັດຖືກຕ້ອງ ຕາມສັນຍາວ່າດ້ວຍການເດີນທາງຂ້າມແດນ ລະຫວ່າງ ສປປ ລາວ ກັບບັນດາປະເທດ ທີ່ມີຊາຍແດນຕິດຈອດ;
3. ປະຕິບັດຕາມກົດໝາຍ, ລະບຽບການພາຍໃນ ຂອງກັນ ແລະ ກັນ ໃຫ້ຖືກຕ້ອງ.

ໃນກໍລະນີພົນລະເມືອງ ຂອງປະເທດທີ່ມີຊາຍແດນຕິດຈອດ ເດີນທາງເຂົ້າມາ ສປປ ລາວ ຢ່າງຖືກຕ້ອງແລ້ວໄດ້ເຮັດປຶ້ມຜ່ານແດນ ຫຼື ໃບຜ່ານແດນ ເສຍຫາຍ, ຖືກລັກ, ໃຊ້ການບໍ່ໄດ້ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ຕໍາຫຼວດ ປະຈໍາຢູ່ພື້ນທີ່ເກີດເຫດ, ເພື່ອອອກໜັງສືຢັ້ງຢືນ ແລ້ວປະສານໄປຍັງເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາຢູ່ດ່ານຊາຍແດນ ທີ່ຜູ້ກ່ຽວໄດ້ເດີນທາງເຂົ້າມາ ກວດກາຄືນເຖິງຄວາມຖືກຕ້ອງ. ຈາກນັ້ນ, ຕ້ອງແຈ້ງໃຫ້ ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາຢູ່ດ່ານເຊິ່ງໜ້າ ເພື່ອຊາບ ແລະ ຮັບເອົາຕົວຜູ້ກ່ຽວ ກັບຄືນປະເທດ.

### ມາດຕາ 5 ການນໍາໃຊ້ພາຫະນະເຂົ້າ-ອອກ ດ່ານຊາຍແດນ

ການນໍາໃຊ້ພາຫະນະເຂົ້າ-ອອກ ດ່ານຊາຍແດນ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ນໍາໃຊ້ພາຫະນະເດີນທາງເຂົ້າ-ອອກ ສປປ ລາວ ຕາມດ່ານທີ່ທາງການກໍານົດ ແລະ ແຈ້ງປຶ້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດ, ປຶ້ມເດີນເຮືອ ຕໍ່ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານ ເພື່ອກວດກາ ຈົ່ງແຈ້ງ ເຂົ້າ-ອອກ, ກໍານົດເວລາພັກເຊົາ ຕາມປະເພດເອກະສານເດີນທາງ ແລະ ຕາມສັນຍາ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
2. ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ນໍາໃຊ້ພາຫະນະເດີນທາງເຂົ້າ-ອອກ ສປປ ລາວ ຕ້ອງແຈ້ງຂໍ້ມູນ ຄື: ຊື່, ນາມສະກຸນ, ວັນເດືອນປີເກີດ, ເລກທີເອກະສານເດີນທາງ, ເພດ, ສັນຊາດ ຂອງຜູ້ຂັບຂີ່ ແລະ ຜູ້ໂດຍສານ ທີ່ເດີນທາງ ນໍາພາຫະນະນັ້ນ ຕາມແບບພິມແຈ້ງເຂົ້າ-ອອກ ຂອງພາຫະນະຂົນສົ່ງໂດຍສານ

ໃຫ້ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານຊາຍແດນ ເພື່ອດໍາເນີນການກວດກາຄວາມຖືກຕ້ອງ ຂອງເອກະສານເດີນທາງ ຂອງຜູ້ຂັບຂີ່ ແລະ ຜູ້ໂດຍສານ;

3. ຜູ້ຂັບຂີ່ ແລະ ຜູ້ໂດຍສານ ທີ່ມານໍາພາຫະນະນັ້ນ ຕ້ອງແຈ້ງເອກະສານເດີນທາງ ຕໍ່ເຈົ້າໜ້າທີ່ ຕໍາຫຼວດ ກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານດ້ວຍຕົນເອງ. ຍົກເວັ້ນ ແຂກຂອງລັດຖະບານ, ບຸກຄົນພິການ, ເຈັບເປັນ ທີ່ບໍ່ສາມາດແຈ້ງເອກະສານເດີນທາງ ດ້ວຍຕົນເອງໄດ້.

**ມາດຕາ 6 ການນໍາໃຊ້ເຮືອບິນຂົນສົ່ງຜູ້ໂດຍສານເຂົ້າ-ອອກ ແລະ ຜ່ານ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນກ່ຽວຂ້ອງ ທີ່ນໍາໃຊ້ເຮືອບິນຂົນສົ່ງຜູ້ໂດຍສານ ເຂົ້າ-ອອກ ແລະ ຜ່ານ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:

1. **ຂາເຂົ້າ** ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ ແລະ ສັນຊາດ ຂອງຜູ້ໂດຍສານ ທີ່ມາຈອງປີ້ເຮືອບິນ ກ່ອນການບໍລິການແຈ້ງປີ້ 4 ຊົ່ວໂມງ. ຫຼັງຈາກນັ້ນ, ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນປີເກີດ, ເລກທີເອກະສານເດີນທາງ, ເພດ ແລະ ສັນຊາດ ຂອງຜູ້ໂດຍສານ ທີ່ມີໜ້າຂຶ້ນເຮືອບິນຕົວຈິງ ກ່ອນເຮືອບິນຈະເດີນທາງອອກຈາກສະໜາມບິນຕົ້ນທາງ 40 ຫາ 60 ນາທີ ໃຫ້ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານ ເພື່ອກວດກາຂໍ້ມູນ;

2. **ຂາອອກ** ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ ແລະ ສັນຊາດ ຂອງຜູ້ໂດຍສານ ທີ່ມາຈອງປີ້ເຮືອບິນ ກ່ອນການບໍລິການແຈ້ງປີ້ 40 ຫາ 60 ນາທີ. ຫຼັງຈາກນັ້ນ, ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນປີເກີດ, ເລກທີເອກະສານເດີນທາງ, ເພດ, ສັນຊາດ ຂອງຜູ້ໂດຍສານ ທີ່ມີໜ້າຂຶ້ນເຮືອບິນຕົວຈິງ ພ້ອມທັງເຊັນຢັ້ງຢືນຮັບຮູ້ ບັນຊີລາຍຊື່ຜູ້ໂດຍສານດັ່ງກ່າວ ຈາກເຈົ້າໜ້າທີ່ບໍລິການ ການບິນທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຈຶ່ງອະນຸຍາດປ່ອຍເຮືອບິນຂຶ້ນໄດ້;

3. ສໍາລັບ ເຮືອບິນເຊົ່າເໝົາລໍາ, ເຮືອບິນພິເສດ ແລະ ເຮືອບິນສ່ວນຕົວ ກໍໃຫ້ປະຕິບັດຕາມ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້.

**ມາດຕາ 7 ການນໍາໃຊ້ເຮືອບິນຂົນສົ່ງຜູ້ໂດຍສານ ພາຍໃນປະເທດ**

ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນກ່ຽວຂ້ອງ ທີ່ນໍາໃຊ້ເຮືອບິນຂົນສົ່ງຜູ້ໂດຍສານ ພາຍໃນປະເທດ ໃຫ້ປະຕິບັດ ດັ່ງນີ້:

1. **ຂາເຂົ້າ** ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນປີເກີດ, ເພດ, ສັນຊາດ, ບັດປະຈໍາຕົວ ຫຼື ປຶ້ມສໍາມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ເອກະສານເດີນທາງ ຂອງຜູ້ໂດຍສານທີ່ຂຶ້ນເຮືອບິນຕົວຈິງ ກ່ອນເຮືອບິນຈະເດີນທາງອອກ ຈາກສະໜາມບິນຕົ້ນທາງ 30 ຫາ 50 ນາທີ ໃຫ້ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານ ເພື່ອກວດກາຂໍ້ມູນ;

2. **ຂາອອກ** ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ ແລະ ສັນຊາດ ຂອງຜູ້ໂດຍສານ ທີ່ມາຈອງປີ້ເຮືອບິນ ກ່ອນການບໍລິການແຈ້ງປີ້ 30 ຫາ 50 ນາທີ. ຫຼັງຈາກນັ້ນ, ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນປີເກີດ, ເພດ, ສັນຊາດ, ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໃບຢັ້ງຢືນທີ່ຢູ່ ຫຼື ເອກະສານເດີນທາງ ຂອງຜູ້ໂດຍສານ ທີ່ຂຶ້ນເຮືອບິນຕົວຈິງ ພ້ອມທັງເຊັນຢັ້ງຢືນຮັບຮູ້ບັນຊີລາຍຊື່ຜູ້ໂດຍສານດັ່ງກ່າວ ຈາກເຈົ້າໜ້າທີ່ບໍລິການ ການບິນ ທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຈຶ່ງອະນຸຍາດປ່ອຍເຮືອບິນຂຶ້ນໄດ້;

3. ສໍາລັບ ເຮືອບິນເຊົ່າເໝົາລໍາ, ເຮືອບິນພິເສດ ແລະ ເຮືອບິນສ່ວນຕົວ ກໍໃຫ້ປະຕິບັດຕາມ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້.

# ໝວດທີ 3
# ການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຕາປະທັບກ່ຽວກັບວຽກງານກວດຄົນເຂົ້າ-ອອກ ສປປ ລາວ

## ມາດຕາ 8 ການຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ນຳໃຊ້ໜັງສືຜ່ານແດນ ຫຼື ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້ ຫາກມີຈຸດປະສົງຢູ່ເກີນກຳນົດເວລາພັກເຊົາເບື້ອງຕົ້ນ ທີ່ທາງການກຳນົດ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ ທີ່ເຂົ້າມາ ສປປ ລາວ ຢ່າງຖືກຕ້ອງ ຫາກມີຈຸດປະສົງຢູ່ເກີນກຳນົດເວລາພັກເຊົາເບື້ອງຕົ້ນ ຕາມການອະນຸຍາດຂອງເຈົ້າໜ້າທີ່ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານຊາຍແດນ ແລະ ສະໜາມບິນສາກົນ ໄດ້ກຳນົດໃຫ້, ສາມາດສະເໜີຂໍຕໍ່ເວລາພັກເຊົາໄດ້ ບໍ່ເກີນ ສອງຄັ້ງ, ແຕ່ລະຄັ້ງຕ້ອງມາຕໍ່ກ່ອນເວລາພັກເຊົາໝົດກຳນົດສາມວັນ ແລະ ການຕໍ່ເວລາພັກເຊົາ ບໍ່ໃຫ້ເກີນກຳນົດເບື້ອງຕົ້ນ ທີ່ເຈົ້າໜ້າທີ່ ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ກຳນົດໃຫ້;

2. ບຸກຄົນ ເຂົ້າມາໃນນາມຍົກເວັ້ນວິຊາ, ວິຊາຜ່ານ ຫຼື ໄດ້ຕໍ່ເວລາພັກເຊົາແລ້ວສອງຄັ້ງ ບໍ່ສາມາດຂໍຕໍ່ເວລາພັກເຊົາຕື່ມໄດ້, ຍົກເວັ້ນ ກໍລະນີ ມີພາວະສຸກເສີນພິເສດ ຕາມແຈ້ງການຂອງລັດຖະບານ ສປປ ລາວ ຫຼື ກໍລະນີມີຄວາມຈຳເປັນອື່ນ ແຕ່ຕ້ອງມີເອກະສານຢັ້ງຢືນ ຈາກພາກສ່ວນກ່ຽວຂ້ອງ;

3. ບຸກຄົນ ທີ່ເປັນພົນລະເມືອງ ຂອງປະເທດຫ້າມເອົາວິຊາກັບດ່ານ, ພົນລະເມືອງ ຂອງປະເທດທີ່ມີຄວາມສ່ຽງ ໄດ້ເຂົ້າມາ ສປປ ລາວ ຢ່າງຖືກຕ້ອງ ຫາກມີຈຸດປະສົງ ຢູ່ເກີນກຳນົດເວລາພັກເຊົາເບື້ອງຕົ້ນ ທີ່ໄດ້ກຳນົດໃຫ້ ສາມາດສະເໜີຂໍຕໍ່ເວລາພັກເຊົາໄດ້ ຢູ່ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ແຕ່ຕ້ອງມີເງື່ອນໄຂ ດັ່ງນີ້:

- ຕ້ອງນຳໃຊ້ໜັງສືຜ່ານແດນ ທີ່ຖືກຕ້ອງ, ຄົບຖ້ວນ, ສົມບູນ ແລະ ມີອາຍຸການນຳໃຊ້ ຫຼາຍກວ່າ ໜຶ່ງຮ້ອຍແປດສິບວັນ ຂຶ້ນໄປ (ຍົກເວັ້ນກໍລະນີສະເພາະ);
- ເຂົ້າມາຍື່ນຄຳຮ້ອງຂໍຕໍ່ເວລາພັກເຊົາ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງດ້ວຍຕົນເອງ;
- ຕ້ອງມີໜັງສືສະເໜີ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ;
- ມີຖານະທາງດ້ານການເງິນພຽງພໍ ໃນໄລຍະ ຢູ່ ສປປ ລາວ, ມີສະຖານທີ່ພັກເຊົາ ຢ່າງຊັດເຈນ ແລະ ສາມາດຕິດຕໍ່ພົວພັນໄດ້ສະດວກ.

ບັນຊີລາຍຊື່ ຂອງບັນດາປະເທດ ທີ່ຫ້າມເອົາວິຊາກັບດ່ານ ແລະ ປະເທດທີ່ມີຄວາມສ່ຽງ ຈະມີການປ່ຽນແປງແຕ່ລະໄລຍະ ຕາມແຈ້ງການ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ.

4. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ບໍ່ມີສິດອອກອະນຸຍາດຕໍ່ເວລາພັກເຊົາໃຫ້ບຸກຄົນທີ່ເປັນພົນລະເມືອງ ຂອງບັນດາປະເທດທີ່ຫ້າມເອົາວິຊາກັບດ່ານ ແລະ ພົນລະເມືອງ ຂອງບັນດາປະເທດທີ່ມີຄວາມສ່ຽງ;

5. ການຕໍ່ເວລາພັກເຊົາ ສຳລັບຄົນເຊື້ອຊາດລາວ ສັນຊາດຕ່າງປະເທດ ຫຼື ຄົນເຊື້ອຊາດລາວ ບໍ່ມີສັນຊາດ ປະຕິບັດຕາມດຳລັດ ວ່າດ້ວຍການອອກວິຊາ ແລະ ການກຳນົດເວລາພັກເຊົາ ຢູ່ ສປປ ລາວ ໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ສະບັບເລກທີ 475/ລບ, ລົງວັນທີ 16 ກໍລະກົດ 2021 ແລະ ກົດໝາຍ, ລະບຽບການ ທີ່ປະກາດໃຊ້ແຕ່ລະໄລຍະ;

6. ສຳລັບບຸກຄົນ ທີ່ນຳໃຊ້ປຶ້ມຜ່ານແດນ, ໃບຜ່ານແດນ ເດີນທາງເຂົ້າມາ ສປປ ລາວ ຢ່າງຖືກຕ້ອງ ຖ້າຫາກມີຈຸດປະສົງ ຢູ່ເກີນກຳນົດເວລາພັກເຊົາເບື້ອງຕົ້ນ, ສາມາດສະເໜີຂໍຕໍ່ເວລາພັກເຊົາໄດ້ ບໍ່ເກີນ ສອງຄັ້ງ ຢູ່ ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ, ແຕ່ລະຄັ້ງບໍ່ໃຫ້ເກີນກຳນົດເວລາພັກເຊົາເບື້ອງຕົ້ນ ທີ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານຊາຍແດນ ກຳນົດໃຫ້ ແລະ ຕ້ອງປະຕິບັດຕາມສັນຍາ ວ່າດ້ວຍການຂ້າມແດນສອງຝ່າຍ, ກົດໝາຍ, ລະບຽບການພາຍໃນ ຂອງ ສປປ ລາວ;

7. ການຕໍ່ເວລາພັກເຊົາ ຕ້ອງປະກອບຄຳຮ້ອງແບບພິມ ການຕໍ່ເວລາພັກເຊົາ, ເອກະສານອື່ນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ພ້ອມທັງຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຫຼື ຄ່າປັບໃໝຢູ່ເກີນກຳນົດເວລາພັກເຊົາ ຕາມລະບຽບການ;

8. ກຳນົດເວລາ ໃນການພິຈາລະນາອະນຸຍາດຕໍ່ເວລາພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ມີກຳນົດ ໜຶ່ງ ຫາ ສອງວັນ ລັດຖະການ.

### ມາດຕາ 9 ຕາປະທັບ ກ່ຽວກັບວຽກງານກວດຄົນເຂົ້າ-ອອກ ສປປ ລາວ

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ຂັ້ນແຂວງ ມີຕາປະທັບ ເຊັ່ນ: ຕາປະທັບ ຕໍ່ເວລາພັກເຊົາ, ນຳໃຊ້ແລ້ວ, ລຶບລ້າງ, ດັດແກ້, ຕໍ່ຄັ້ງສຸດທ້າຍ, ຕໍ່ໃຫ້ອອກ ແລະ ອື່ນໆ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະກວດຄົນເຂົ້າ-ອອກ ສປປ ລາວ;

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ມີຕາປະທັບສະເພາະ ນຳໃຊ້ສຳລັບ ເອກະສານເດີນທາງເຫຼັ້ມໃໝ່ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອຢັ້ງຢືນຂໍ້ມູນຈາກເອກະສານເດີນທາງເຫຼັ້ມເກົ່າ ຫຼື ເອກະສານກ່ຽວຂ້ອງອື່ນ (ເອກະສານເດີນທາງເສຍຫາຍ ຫຼື ເດັກເກີດໃໝ່ ຢູ່ ສປປ ລາວ);

ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ມີຕາປະທັບ ນຳໃຊ້ເຂົ້າໃນວຽກງານທາງລັດຖະການ, ຕາປະທັບແຈ້ງເຂົ້າ-ອອກ ສປປ ລາວ ໃຫ້ຜູ້ໂດຍສານ, ພາຫະນະ, ຕາປະທັບນຳໃຊ້ແລ້ວ ແລະ ຕາປະທັບລຶບລ້າງ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະ ຢູ່ບັນດາດ່ານຊາຍແດນ ແລະ ສະໜາມບິນສາກົນ ໃນຂອບເຂດທົ່ວປະເທດ;

ພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ຢູ່ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ຂັ້ນແຂວງ ແລະ ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ຕ້ອງສະເໜີໂດຍກົງຫາ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຄົ້ນຄວ້າ, ອອກແບບ ຕາປະທັບ ນຳໃຊ້ເຂົ້າໃນວຽກງານກວດຄົນເຂົ້າ-ອອກ ສປປ ລາວ ເພື່ອນຳສະເໜີຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ. ເມື່ອໄດ້ຮັບຕາປະທັບໃໝ່ປ່ຽນແທນອັນເກົ່າ, ຕ້ອງນຳສົ່ງຕາປະທັບເກົ່າ ໃຫ້ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອລຶບລ້າງ.

## ໝວດທີ 4
## ການປະກອບເອກະສານຂໍປຶ້ມຜ່ານແດນ, ໃບຜ່ານແດນ
## ແລະ ກຳນົດເວລາອະນຸຍາດ

### ມາດຕາ 10 ການປະກອບເອກະສານຂໍປຶ້ມຜ່ານແດນ ແລະ ໃບຜ່ານແດນ

ການຂໍປຶ້ມຜ່ານແດນ ແລະ ໃບຜ່ານແດນ ຢູ່ ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ຂັ້ນແຂວງ ຕ້ອງປະກອບເອກະສານ ດັ່ງນີ້:

1. ສຳເນົາປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ 01 ສະບັບ;
2. ຮູບຖ່າຍຂະໜາດ 3 x 4 ຈຳນວນ 02 ໃບ (ອາຍຸຮູບຖ່າຍບໍ່ເກີນ 90 ວັນ);
3. ປະກອບແບບພິມຄຳຮ້ອງ ຂໍປຶ້ມຜ່ານແດນ, ໃບຜ່ານແດນ 01 ສະບັບ;
4. ສຳລັບເດັກຕິດຕາມ ທີ່ຍັງບໍ່ໄດ້ຂຶ້ນສຳມະໂນຄົວ ຕ້ອງມີສຳເນົາໜັງສືຢັ້ງຢືນການເກີດ.

### ມາດຕາ 11 ການກຳນົດເວລາ ອອກປຶ້ມຜ່ານແດນ ແລະ ໃບຜ່ານແດນ

ກຳນົດເວລາ ອອກປຶ້ມຜ່ານແດນ ແລະ ໃບຜ່ານແດນ ມີກຳນົດເວລາ ດັ່ງນີ້:

1. ປຶ້ມຜ່ານແດນ ສອງວັນ ລັດຖະການ;
2. ໃບຜ່ານແດນ ໜຶ່ງວັນ ລັດຖະການ.

## ໝວດທີ 5
## ການຂໍກວດກາຂໍ້ມູນຜ່ານບັນຊີບຸກຄົນຫ້າມເຂົ້າ ສປປ ລາວ ແລະ ຂໍ້ມູນການເດີນທາງເຂົ້າ-ອອກ ສປປ ລາວ

### ມາດຕາ 12 ການຂໍກວດກາຂໍ້ມູນຜ່ານບັນຊີບຸກຄົນຫ້າມເຂົ້າ ສປປ ລາວ (ໃຫມ່)

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ຕ້ອງການນຳເອົາຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຂົ້າມາ ສປປ ລາວ ເພື່ອລົງທຶນ, ປະກອບອາຊີບ, ອອກແຮງງານ, ຂໍຢູ່ລາວຖາວອນ ແລະ ແຕ່ງດອງກັບພົນລະເມືອງລາວ ຫຼື ໃນກໍລະນີອື່ນໆ ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນປີເກີດ, ເພດ, ສັນຊາດ ແລະ ເລກທີໜັງສືຜ່ານແດນ ຫຼື ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້ ສະເໜີເຖິງ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອກວດກາຂໍ້ມູນຜ່ານບັນຊີບຸກຄົນຫ້າມເຂົ້າ ສປປ ລາວ.

### ມາດຕາ 13 ການຂໍກວດກາຂໍ້ມູນການເດີນທາງເຂົ້າ-ອອກ ສປປ ລາວ

ອົງການຈັດຕັ້ງລັດ, ສະພາທະນາຍຄວາມ, ວິສາຫະກິດກົດໝາຍ ທີ່ມີຈຸດປະສົງ ຂໍກວດກາຂໍ້ມູນການເດີນທາງເຂົ້າ-ອອກ ສປປ ລາວ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳໃຊ້ເຂົ້າໃນການສືບສວນ-ສອບສວນ ຫຼື ຂະບວນການທາງດ້ານກົດໝາຍ ຕ້ອງແຈ້ງຂໍ້ມູນ ຊື່, ນາມສະກຸນ, ວັນເດືອນ ປີເກີດ, ເພດ, ສັນຊາດ ແລະ ເລກທີໜັງສືຜ່ານແດນ ຫຼື ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້ ຂອງເປົ້າໝາຍທີ່ຕ້ອງການກວດກາ ສະເໜີເປັນລາຍລັກອັກສອນ ເຖິງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອຄົ້ນຄວ້າ ແລະ ພິຈາລະນາ ສະໜອງຂໍ້ມູນເປັນລາຍລັກອັກສອນ ຫຼື ບໍ່ເປັນລາຍລັກອັກສອນ.

### ມາດຕາ 14 ການປະກອບເອກະສານ ເພື່ອຂໍກວດກາຂໍ້ມູນຜ່ານບັນຊີບຸກຄົນຫ້າມເຂົ້າ ສປປ ລາວ

ການປະກອບເອກະສານ ເພື່ອຂໍກວດຜ່ານບັນຊີບຸກຄົນຫ້າມເຂົ້າ ສປປ ລາວ ປະກອບມີ ດັ່ງນີ້:

1. ໜັງສືສະເໜີ;
2. ສຳເນົາໜັງສືຜ່ານແດນ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບທະບຽນອາກອນ ທີ່ນຳໃຊ້ໄດ້;
5. ສຳເນົາໃບອະນຸຍາດລົງທຶນ;
6. ສຳເນົາໃບທະບຽນສຳປະທານ;
7. ສຳເນົາໃບອະນຸຍາດໂກຕ້ານຳໃຊ້ແຮງງານຕ່າງປະເທດ;
8. ສຳເນົາໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດ.

ການກວດກາຜ່ານບັນຊີຫ້າມເຂົ້າ ສປປ ລາວ ມີກຳນົດເວລາ ໜຶ່ງ ຫາ ສອງວັນ ລັດຖະການ.

### ມາດຕາ 15 ການປະກອບເອກະສານ ເພື່ອຂໍກວດກາຂໍ້ມູນການເດີນທາງ ເຂົ້າ-ອອກ ສປປ ລາວ

ການປະກອບເອກະສານ ເພື່ອຂໍກວດກາຂໍ້ມູນການເດີນທາງ ເຂົ້າ-ອອກ ສປປ ລາວ ປະກອບມີ ດັ່ງນີ້:

1. ໜັງສືສະເໜີ;
2. ສຳເນົາໜັງສືຜ່ານແດນ;
3. ສຳເນົາໃບທະບຽນວິສາຫະກິດ;
4. ໜັງສືແຕ່ງຕັ້ງ ຫຼື ໜັງສືມອບສິດ ໃນການເຂົ້າຮ່ວມຂະບວນການທາງກົດໝາຍ.

ການກວດກາຂໍ້ມູນການເດີນທາງເຂົ້າ-ອອກ ສປປ ລາວ ມີກຳນົດເວລາ ໜຶ່ງ ຫາ ສອງວັນ ລັດຖະການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມ ສໍາລັບເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ**

ຫ້າມເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ມີພຶດຕິກໍາ ດັ່ງນີ້:

1. ເມີນເສີຍ ຫຼື ບໍ່ບັນທຶກຂໍ້ມູນ ການເດີນທາງເຂົ້າ-ອອກ ສປປ ລາວ ຢູ່ດ່ານຊາຍແດນ ແລະ ສະໜາມບິນ ຂອງຜູ້ໂດຍສານ, ພາຫະນະ;
2. ເມີນເສີຍ ຫຼື ບໍ່ບັນທຶກຂໍ້ມູນ ການຕໍ່ເວລາພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ.
3. ຂໍ້ຫ້າມອື່ນ ທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມ ສໍາລັບການນໍາໃຊ້ພາຫະນະຂົນສົ່ງຜູ້ໂດຍສານເຂົ້າ-ອອກ ແລະ ຜ່ານ ສປປ ລາວ.**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນກ່ຽວຂ້ອງ ທີ່ນໍາໃຊ້ພາຫະນະຂົນສົ່ງຜູ້ໂດຍສານເຂົ້າ-ອອກ ແລະ ຜ່ານ ສປປ ລາວ ຢູ່ ບັນດາດ່ານຊາຍແດນ ແລະ ສະໜາມບິນ ມີພຶດຕິກໍາ ດັ່ງນີ້:

1. ນໍາເອົາຜູ້ໂດຍສານ ທີ່ເປັນພົນລະເມືອງ ຂອງບັນດາປະເທດຫ້າມເອົາວິຊາກັບດ່ານ ຕາມແຈ້ງການຂອງ ກະຊວງການຕ່າງປະເທດ ແຕ່ລະໄລຍະ ແລະ ບໍ່ທັນໄດ້ຮັບວິຊາເຂົ້າ ສປປ ລາວ ມານໍາຖ້ຽວບິນ;
2. ນໍາເອົາຜູ້ໂດຍສານ ທີ່ນໍາໃຊ້ໜັງສືຜ່ານແດນທີ່ມີອາຍຸການນໍາໃຊ້ຕໍ່າກວ່າ ໜຶ່ງຮ້ອຍແປດສິບວັນ ເຂົ້າມາ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ນໍາເອົາຜູ້ໂດຍສານ ທີ່ບໍ່ມີລາຍຊື່ ຢູ່ໃນບັນຊີຂຶ້ນເຮືອບິນ ຂອງຖ້ຽວບິນທີ່ເຂົ້າມາ ສປປ ລາວ;
4. ອໍານວຍຄວາມສະດວກ ຫຼື ໃຫ້ການຊ່ວຍເຫຼືອບຸກຄົນອື່ນ ໃນການນໍາໃຊ້ເອກະສານເດີນທາງທີ່ບໍ່ຖືກ ຕ້ອງ ເຂົ້າ-ອອກ ສປປ ລາວ;
5. ອໍານວຍຄວາມສະດວກ ໃຫ້ບຸກຄົນອື່ນ ເຂົ້າ-ອອກ ສປປ ລາວ ໂດຍນໍາໃຊ້ ຫຼື ບໍ່ນໍາໃຊ້ ພາຫະນະອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ນໍາເອົາຜູ້ໂດຍສານເຂົ້າມາ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ ໃນມາດຕາ 9, ມາດຕາ 12 ແລະ ມາດຕາ 13 ຂອງກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ**

ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນ ການປະຕິບັດຄໍາແນະນໍາສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການກໍານົດໄວ້.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຄໍາແນະນໍາສະບັບນີ້ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ສັງຄົມ, ຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ, ສິດ, ເສລີພາບ ຂອງຄົນອື່ນ, ແຕະຕ້ອງເຖິງຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ດໍາເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການ ນຳພາ, ຊີ້ນຳ, ຕິດຕາມ, ກວດກາ ກົມກອງວິຊາສະເພາະ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ບັນດາກົມກອງທີ່ກ່ຽວຂ້ອງ ອ້ອມຂ້າງກະຊວງ, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລວມທັງຈັດຕັ້ງເຜີຍແຜ່ ໃຫ້ບັນດາກົມກອງຕ່າງໆ ໃນທົ່ວກຳລັງປ້ອງກັນຄວາມສະຫງົບ ແລະ ທົ່ວສັງຄົມ ຊາບຢ່າງທົ່ວເຖິງ.

ຜ່ານການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ມີຄວາມສະດວກ, ຄວາມຫຍຸ້ງຍາກປະການໃດ ໃຫ້ກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ ສະຫຼຸບ, ສັງລວມ, ປະເມີນຜົນຂອງການຈັດຕັ້ງປະຕິບັດ ລາຍງານ ຫຼື ຂໍທິດຊີ້ນຳ ຈາກຄະນະພັກ-ຄະນະນຳ ກະຊວງປ້ອງກັນຄວາມສະຫງົບ ເປັນແຕ່ລະໄລຍະ.

ບັນດາກົມກອງ ໃນທົ່ວກຳລັງປ້ອງກັນຄວາມສະຫງົບ, ທຸກພາກສ່ວນຂະແໜງການທີ່ກ່ຽວຂ້ອງ ລວມທັງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ໃນເມື່ອກ່ອນ ທີ່ຂັດກັບຄຳແນະນຳສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ກະຊວງປ້ອງກັນຄວາມສະຫງົບ

ລັດຖະມົນຕີ

ວິໄລ ຫຼ້າຄຳຟອງ